**ຊື່ຕຳແໜ່ງ:** ຜູ້ຈັດການພະແນກຄຸ້ມຄອງຍານພາຫະນະອາວຸໂສ

**ສະຖານທີ່:** ເມືອງ ເຊໂປນ, ແຂວງ ສະຫວັນນະເຂດ, ປະເທດລາວ

**ລະດັບຕຳແໜ່ງ:** 2.2

**ລາຍງານເຖິງ:** ຮອງຫົວໜ້າໂຄງການ

**ຜູ້ລາຍງານທາງກົງ:** ຜູ້ຈັດການພະແນກຄຸ້ມຄອງຍານພາຫະນະ, ຜູ້ຈັດການສາງອາໄຫຼ່

**ຜູ້ລາຍງານທາງອ້ອມ:** ຊ່າງແປງລົດ, ຄົນຂັບລົດ, ຜູ້ປະສານງານພະແນກຍານພາຫະນະ

**ຜູ້ປະສານງານ/ຄວາມສຳພັນພາຍໃນທີ່ສຳຄັນ:** ໜ່ວຍງານບໍລິຫານຄຸ້ມຄອງການປະຕິບັດງານ

**ຜູ້ປະສານງານ/ຄວາມສຳພັນພາຍນອກທີ່ສຳຄັນ:** ຜູ້ສະໜອງອຸປະກອນ

**ຈຸດປະສົງຂອງຕຳແໜ່ງ:** ຜູ້ຈັດການພະແນກຍານພາຫະນະອາວຸໂສ (Senior Fleet Manager) ມີໜ້າທີ່ຮັບຜິດຊອບໃນການຮັບປະກັນວ່າ ຍານພາຫະນະ ແລະ ອຸປະກອນຈັກກົນທັງໝົດຂອງໂຄງການມີຄວາມປອດໄພ, ມີຄວາມໜ້າເຊື່ອຖື, ປະຕິບັດຕາມຂໍ້ກຳນົດ ແລະ ມີຄວາມພ້ອມສຳລັບການນຳໃຊ້ຢູ່ສະເໝີ. ຕຳແໜ່ງນີ້ຈະໃຫ້ການນຳພາດ້ານວິຊາການໃນການຄຸ້ມຄອງວຽກງານສູນສ້ອມແປງ, ການບຳລຸງຮັກສາຍານພາຫະນະ, ການຄຸ້ມຄອງສາງອາໄຫຼ່ຍານພາຫະນະ, ການບໍລິຫານພະນັກງານຂັບລົດ ແລະ ການຕິດຕາມການນຳໃຊ້ນ້ຳມັນເຊື້ອໄຟ ເພື່ອຮັບປະກັນວ່າການດຳເນີນງານທັງໝົດເປັນໄປຕາມມາດຕະຖານການຄຸ້ມຄອງຍານພາຫະນະສາກົນຂອງອົງການ ຮາໂລ.

## ກ່ຽວກັບອົງການ ຮາໂລ ລາວ:

ອົງການ ຮາໂລ ທຣາສທ໌ ແມ່ນອົງການເພື່ອການກຸສົນສາກົນທີ່ປະຕິບັດການເກັບກູ້ ລບຕ ແລະ ລະເບີດຝັງດິນ. ພວກເຮົາປະຕິບັດການສຳຫຼວດ ແລະ ເກັບກູ້ລະເບີດບໍ່ທັນແຕກ (ລບຕ) ຢູ່ ສປປ ລາວ ເຊິ່ງມີພະນັກງານຫຼາຍກວ່າ 1,200 ຄົນ ປະຈຳການຢູ່ເມືອງ ເຊໂປນ, ແຂວງສະຫວັນນະເຂດ ແລະ ມີຫ້ອງການບໍລິຫານຕັ້ງຢູ່ ນະຄອນຫຼວງວຽງຈັນ.

ທີມງານຂອງອົງການ ຮາໂລ ທຣາສທ໌ ຢູ່ເມືອງ ເຊໂປນ ເຮັດວຽກເປັນຮອບວຽນໃນແຕ່ລະເດືອນ ໂດຍສະເລ່ຍ 22-23 ມື້ ເລີ່ມວຽກໃນຕົ້ນເດືອນ ເຊິ່ງມື້ທີ່ເຫຼືອຂອງເດືອນ ເອີ້ນວ່າ 'ສະແຕນດາວ' (ວັນພັກ). ຮອບວຽນການເຮັດວຽກຂອງ ຮາໂລ ໃນເດືອນ ເມສາ ແມ່ນມີໄລຍະສັ້ນ ແລະ ມີວັນຢຸດພັກຜ່ອນຍາວ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບພວກເຮົາ, ທ່ານສາມາດເຂົ້າອ່ານໄດ້ທີ່ນີ້ www.halotrust.org

## ກ່ຽວກັບຕຳແໜ່ງ:

ຜູ້ຈັດການພະແນກຍານພາຫະນະອາວຸໂສ ເປັນຜູ້ປະສານງານຫຼັກຂອງໂຄງການໃນດ້ານການປະກັນຄຸນນະພາບການບໍລິຫານຍານພາຫະນະ ແລະ ການກຳກັບເບິ່ງແຍງດ້ານວິຊາການ. ຕຳແໜ່ງນີ້ ຮັບປະກັນວ່າກິດຈະກຳການບຳລຸງຮັກສາທັງໝົດ, ບັນທຶກຂໍ້ມູນຍານພາຫະນະ, ມາດຕະຖານຂອງພະນັກງານຂັບລົດ ແລະ ການດຳເນີນງານຂອງຍານພາຫະນະ ຖືກບໍລິຫານຜ່ານລະບົບ Fleet Management System

(FMS) ແລະ ສອດຄ່ອງກັບນະໂຍບາຍການບໍລິຫານຍານພາຫະນະລະດັບສາກົນຂອງ ຣາໂລ. ນອກຈາກນັ້ນ, ຕຳແໜ່ງນີ້ຍັງຮັບຜິດຊອບໃນການພັດທະນາຄວາມສາມາດຂອງບຸກຄະລາກອນດ້ານຍານພາຫະນະ, ຊຸກຍູ້ໂຄງການບຳລຸງຮັກສາເຊີງປ້ອງກັນ (Preventative Maintenance) ແລະ ນຳໃຊ້ຂໍ້ມູນຜົນການດຳເນີນງານຂອງຍານພາຫະນະ ເພື່ອສະໜັບສະໜູນການປັບປຸງຢ່າງຕໍ່ເນື່ອງ ແລະ ເພີ່ມປະສິດທິພາບໃນການດຳເນີນງານ.

## ໜ້າທີ່ຮັບຜິດຊອບ:

ການບຳລຸງຮັກສາຍານພາຫະນະ – ຍານພາຫະນະທີ່ປອດໄພ

- ຮັບປະກັນວ່າຍານພາຫະນະ ແລະ ອຸປະກອນຈັກກົນທັງໝົດໄດ້ຮັບການບຳລຸງຮັກສາ, ສ້ອມແປງ ແລະ ກວດສອບຕາມມາດຕະຖານຂອງ ຣາໂລ.
- ອະນຸມັດຄຸນນະພາບການສ້ອມແປງ ແລະ ເຮັດໃຫ້ຍານພາຫະນະກັບມາໃຊ້ງານໄດ້ອີກຄັ້ງ ໂດຍຮັບປະກັນວ່າບໍ່ມີຂໍ້ບົກພ່ອງດ້ານຄວາມປອດໄພທີ່ຍັງບໍ່ໄດ້ແກ້ໄຂ.
- ຕິດຕາມຜົນການໃຊ້ງານຂອງຍານພາຫະນະ ແລະ ລະບຸບັນຫາການບຳລຸງຮັກສາທີ່ເກີດຂຶ້ນຊ້ຳໆ ພ້ອມສະເໜີແນວທາງປັບປຸງ.
- ຈັດຕັ້ງປະຕິບັດ ແລະ ຮັກສາໂຄງການບຳລຸງຮັກສາເຊີງປ້ອງກັນ ສຳລັບອຸປະກອນ ແລະ ເຄື່ອງຈັກໃນສູນສ້ອມແປງ.

ການຄຸ້ມຄອງການນຳໃຊ້ຍານພາຫະນະ – ການເດີນທາງທີ່ປອດໄພ

- ຮັບປະກັນວ່າແຜນການນຳໃຊ້ ແລະ ຈັດສັນຍານພາຫະນະມີການປັບປຸງເປັນປະຈຳ ແລະ ສາມາດຕອບສະໜອງຄວາມຕ້ອງການດ້ານການປະຕິບັດງານ.
- ຮັກສາຄວາມຖືກຕ້ອງຂອງບັນທຶກຂໍ້ມູນຍານພາຫະນະ, ປະຫວັດການບຳລຸງຮັກສາ, ຂໍ້ມູນພະນັກງານຂັບລົດ ແລະ ຂໍ້ມູນຄັງອຸປະກອນ.
- ນຳພາການກວດສອບ, ການກວດກາ ແລະ ການທົບທວນຄວາມສອດຄ່ອງດ້ານຍານພາຫະນະ ພ້ອມດຳເນີນມາດຕະການດ້ານຄວາມປອດໄພຕາມຄວາມຈຳເປັນ.

ພະນັກງານຂັບລົດທີ່ປອດໄພ

- ຄຸ້ມຄອງ ແລະ ຕິດຕາມພຶດຕິກຳການຂັບຂີ່, ການອະນຸຍາດຂັບລົດ, ການປະເມີນຜົນ ແລະ ການຝຶກອົບຮົມພະນັກງານຂັບລົດ.
- ນຳພາການສືບສວນອຸປະຕິເຫດທີ່ກ່ຽວກັບຍານພາຫະນະ, ພຶດຕິກຳການເຮັດວຽກທີ່ບໍ່ປອດໄພ ແລະ ການບໍ່ປະຕິບັດຕາມລະບຽບ.
- ສົ່ງເສີມວັດທະນະທຳດ້ານຄວາມປອດໄພໃນການຂັບຂີ່ ແລະ ການດູແລຮັກສາຍານພາຫະນະ.

ຄັງອາໄຫຼ່, ນ້ຳມັນ ແລະ ການຄວບຄຸມຊັບສິນ

- ຄວບຄຸມຄັງອາໄຫຼ່ຍານພາຫະນະ ໃຫ້ມີການຄຸ້ມຄອງສະຕັອກຢ່າງເໝາະສົມ ແລະ ປັບປຸງລະດັບການສັ່ງຊື້ຄືນ ສຳລັບອາໄຫຼ່ສຳຮອງແລະ ວັດສະດຸສິ້ນເປືອງທີ່ສຳຄັນ ເພື່ອສະໜັບສະໜູນແຜນການຈັດຊື້.
- ຕິດຕາມການນຳໃຊ້ນ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ພ້ອມອະທິບາຍ ຫຼື ສືບສວນຄວາມແຕກຕ່າງທີ່ຜິດປົກກະຕິ.
- ຮັບປະກັນວ່າຊັບສິນດ້ານຍານພາຫະນະ, ເຄື່ອງມື ແລະ ອຸປະກອນໃນສູນສ້ອມແປງ ໄດ້ຮັບການຄຸ້ມຄອງ ແລະ ບຳລຸງຮັກສາຢ່າງຖືກຕ້ອງ.

ສຸຂະພາບ, ຄວາມປອດໄພ ແລະ ການປະຕິບັດຕາມລະບຽບ

- ດຳເນີນການກວດສອບຄວາມປອດໄພໃນສູນສ້ອມແປງເປັນປະຈຳ ແລະ ຮັບປະກັນວ່າການດຳເນີນງານຂອງສູນສ້ອມແປງ ແລະຍານພາຫະນະ ສອດຄ່ອງກັບຂໍ້ກຳນົດດ້ານສຸຂະພາບ ແລະ ຄວາມປອດໄພທັງໝົດ.
- ຮັບປະກັນວ່າມີອຸປະກອນປ້ອງກັນສ່ວນບຸກຄົນ (PPE) ຢ່າງພຽງພໍ ແລະ ຖືກນຳໃຊ້ຢ່າງຖືກຕ້ອງ.

- ຮັກສາຄວາມປອດໄພຂອງສະຖານທີ່ດ້ານຍານພາຫະນະ, ສາງນໍ້າມັນ, ພື້ນທີ່ສາກໄຟແບັດເຕີຣີ ແລະ ສະພາບແວດລ້ອມໃນສູນສ້ອມແປງໃຫ້ປອດໄພໃນການເຮັດວຽກ.

## ທົ່ວໄປ:

1. ຍຶດໝັ້ນໃນຄ່ານິຍົມຫຼັກ ແລະ ມາດຕະຖານຂອງ ຣາໂລ ພ້ອມທັງສິ່ງເສີມຈາລິຍະທຳ ແລະ ພາລະກິດຂອງອົງການ.
2. ຮັບປະກັນວ່າມີຄວາມຄຸ້ນເຄີຍ ແລະ ປະຕິບັດຕາມນະໂຍບາຍ ແລະ ລະບຽບການທັງໝົດຂອງ ຣາໂລ ຢ່າງເຄັ່ງຄັດ, ໂດຍສະເພາະຈັນຍາບັນໃນການປະພຶດ ແລະ ນະໂຍບາຍການປ້ອງກັນຄຸ້ມຄອງ.

## ຄຸນສົມບັດທີ່ຈຳເປັນ:

- ສຳເລັດການສຶກສາໃນສາຂາ ວິສະວະກຳກົນຈັກ, ເຕັກໂນໂລຢີຍານຍົນ, ການບໍລິຫານຍານພາຫະນະ, ການບໍລິຫານການຂົນສົ່ງ ຫຼື ສາຂາທີ່ກ່ຽວຂ້ອງ (ຈະໄດ້ຮັບການພິຈາລະນາເປັນພິເສດ).
- ມີປະສົບການຈຳນວນຫຼາຍ ໃນດ້ານການບໍລິຫານຍານພາຫະນະ, ການບໍລິຫານສູນສ້ອມແປງ, ລະບົບການບຳລຸງຮັກສາຍານພາຫະນະ ຫຼື ວິສະວະກຳຍານຍົນ.
- ມີຄວາມຮູ້ເປັນຢ່າງດີກ່ຽວກັບ ການວິນິດໄສ ແລະ ການວິເຄາະບັນຫາຂອງຍານພາຫະນະ ລວມທັງເຂົ້າໃຈລະບົບກົນຈັກ, ລະບົບໄຟຟ້າ ແລະ ລະບົບໄຮໂດຣລິກ.
- ມີປະສົບການໃນການຄຸ້ມຄອງລະບົບບໍລິຫານຄຸ້ມຄອງຍານພາຫະນະ ລວມທັງການກຳກັບເບິ່ງແຍງຊ່າງແປງລົດ ແລະ ພະນັກງານຂັບລົດ.
- ມີທັກສະຄວາມເປັນຜູ້ນຳ, ການສື່ສານ ແລະ ການສ້າງສາຍພົວພັນລະຫວ່າງບຸກຄົນໃນລະດັບດີ.
- ມີທັກສະການສື່ສານທັງດ້ານການຂຽນ ແລະ ການເວົ້າເປັນຢ່າງດີທັງໃນ ພາສາລາວ ຫຼື ພາສາອັງກິດ.

## ຄຸນສົມບັດເພີ່ມຕື່ມທີ່ຕ້ອງການ:

- ມີປະສົບການເຮັດວຽກໃນພາກສ່ວນອົງການບໍ່ຫວັງຜົນກຳໄລ (NGO), ອຸດສາຫະກຳບໍ່ແຮ່ ຫຼື ການປະຕິບັດງານໃນເຂດພື້ນທີ່ຫ່າງໄກ.
- ມີປະສົບການໃນການນຳໃຊ້ລະບົບຕິດຕາມຍານພາຫະນະຜ່ານ GPS ແລະ ລະບົບບໍລິຫານຍານພາຫະນະ.
- ມີປະສົບການໃນການພັດທະນາ ຫຼື ຈັດການຝຶກອົບຮົມພະນັກງານຂັບລົດ ຫຼື ຊ່າງແປງລົດ.
- ມີປະສົບການໃນການຄຸ້ມຄອງກຸ່ມຍານພາຫະນະຈຳນວນຫຼາຍ ແລະ ກະຈາຍຢູ່ຫຼາຍພື້ນທີ່ທາງພູມສາດ.

## ຂໍ້ກຳນົດທາງດ້ານຮ່າງກາຍສຳລັບຕຳແໜ່ງ:

ສາມາດທົນຕໍ່ການເຮັດວຽກໃນສະພາບອາກາດຮ້ອນໄດ້ເປັນຢ່າງດີ, ສາມາດຢືນປະຕິບັດວຽກເປັນເວລາດົນນານໄດ້,  ສາມາດຍົກ ແລະ ເຄື່ອນຍ້າຍວັດຖຸ ຫຼື ອຸປະກອນທີ່ມີນໍ້າໜັກຫຼາຍໄດ້.

## ຂໍ້ກຳນົດໃນການເດີນທາງ

ສາມາດເດີນທາງໄປປະຕິບັດວຽກໃນພື້ນທີ່ປະຕິບັດງານຕ່າງໆ ຂອງ ຣາໂລ ໄດ້ຕາມຄວາມຈຳເປັນ.

**ວິທີສະໝັກ:**

ກະລຸນາສົ່ງຊີວະປະຫວັດ (CV, ບໍ່ເກີນ 2 ໜ້າ) ແລະ ໜັງສືສະໝັກງານ (Cover Letter, ບໍ່ເກີນ 1 ໜ້າ) ລະບຸວ່າປະສົບການຂອງທ່ານສອດຄ່ອງກັບທັກສະ ແລະ ຄວາມສາມາດຫຼັກຂອງຕໍາແໜ່ງແນວໃດ, ພ້ອມດ້ວຍເງິນເດືອນທີ່ຄາດຫວັງ ຫາອີເມລ: hr@halolaos.org ພາຍໃນວັນທີ **21/09/2026**

ຟອມສະໝັກທີ່ບໍ່ແນບໜັງສືສະໝັກງານ ທີ່ສ້າງຂຶ້ນເພື່ອສະໝັກຕໍາແໜ່ງນີ້ໂດຍສະເພາະ ຈະບໍ່ໄດ້ຮັບການພິຈາລະນາ.

ພວກເຮົາຂໍສະຫງວນສິດໃນການປ່ຽນແປງມື້ປິດຮັບສະໝັກ ອີງຕາມຈໍານວນຜູ້ສະໝັກທີ່ອົງການໄດ້ຮັບ.

*ອົງການ ຮາໂລ ທຣາສທ໌ ແມ່ນຜູ້ຈ້າງງານທີ່ໃຫ້ໂອກາດຢ່າງເທົ່າທຽມ ແລະ ບໍ່ແບ່ງແຍກ ຫຼື ເລືອກປະຕິບັດຕໍ່ຜູ້ສະໝັກວຽກບໍ່ວ່າດ້ວຍເຫດຜົນໃດກໍຕາມເຊັ່ນ: ອາຍຸ, ຄວາມພິການ, ການແປງເພດ, ການແຕ່ງງານ ແລະ ການຈົດທະບຽນຄູ່ສົມລົດ, ການຖືພາ ແລະ ການເປັນແມ່, ເຊື້ອຊາດ, ສາສະໜາ ຫຼື ຄວາມເຊື່ອ, ເພດ ຫຼື ລົດສະນິຍົມທາງເພດ.*

*ອົງການ ຮາໂລ ທຣາສທ໌ ມີຄວາມມຸ່ງໝັ້ນໃນການສ້າງວັດທະນະທໍາທີ່ມີຄວາມຫຼາກຫຼາຍ ແລະ ຄອບຄຸມ ໂດຍເນັ້ນການຈັດຫາ, ພັດທະນາ ແລະ ຮັກສາບຸກຄະລາກອນທີ່ມີຄວາມສາມາດຈາກກຸ່ມຜູ້ສະໝັກທີ່ມີຄວາມຫຼາກຫຼາຍ.*

*ອົງການ ຮາໂລ ທຣາສທ໌ ມີຄວາມມຸ່ງໝັ້ນໃນການຮັບປະກັນວ່າ ສະພາບແວດລ້ອມແມ່ນມີຄວາມປອດໄພ ແລະ ໜ້າເຊື່ອຖື ໂດຍໃຫ້ຄວາມສໍາຄັນກັບການຄຸ້ມຄອງ ແລະ ສົ່ງເສີມສະຫວັດດີການ ແລະ ການເປັນຢູ່ທີ່ດີຂອງທຸກຄົນທີ່ມີສ່ວນກ່ຽວຂ້ອງ ຫຼື ເປັນສ່ວນໜຶ່ງຂອງອົງການ ໂດຍມີມາດຕະການເດັດຂາດຕໍ່ພຶດຕິກໍາໃດໆທີ່ຂັດຕໍ່ຫຼັກການດັ່ງກ່າວ.*

**Job Title:** Senior Fleet Manager
**Location:** Sepon, Lao PDR
**PO Level:** 2.2

**Reports To:** Deputy Programme Manager
**Direct Reports:** Fleet Manager, Fleet Store Manager,
**Indirect Reports:** Mechanics, Drivers, Fleet Coordinators

**Key Internal Contacts/Relationships:** Operations Management Unit
**Key External Contacts/Relationships:** Suppliers

**Job Purpose:** The Senior Fleet Manager is responsible for ensuring the safety, reliability, compliance and operational readiness of all programme vehicles and mechanical equipment. The role provides technical leadership across workshop operations, fleet maintenance, fleet stores, driver management, and fuel monitoring, ensuring compliance with HALO global fleet standards.

## About HALO Laos:

The HALO Trust is an international landmine and UXO clearance charity. We work in Lao PDR conducting survey and clearance of Unexploded Ordnance (UXO), employing over 1,200 staff based in Sepon, Savannakhet Province, with a small administrative office in Vientiane.

The HALO Trust team in Sepon works a monthly cycle, with an average of 22-23 days worked at the start of the month, with the remainder of the month as 'standdown' (rest days). HALO works a short cycle during April with an extended break for public holidays. More information on us can be found here www.halotrust.org.

## About the role:

The Senior Fleet Manager acts as the programme focal point for fleet quality assurance and technical governance, ensuring all maintenance activities, fleet records, driver standards and vehicle operations are managed through the Fleet Management System and in accordance with global fleet policies. The role develops fleet staff capability, drives preventative maintenance programmes and uses fleet performance data to support continuous improvement and operational effectiveness.

## Responsibilities:

Fleet Maintenance – Safe Vehicles

- Ensure all vehicles and mechanical equipment are maintained, repaired and inspected in accordance with HALO standards
- Approve repair quality and return-to-service decisions, ensuring no safety-critical defects remain unresolved
- Monitor vehicle performance and identify recurring maintenance issues and slate improvements

- Implement and maintain preventive maintenance programs for workshop equipment and machinery.

Fleet Operations – Safe Journeys

- Ensure fleet deployment plans are updated and responsive to operational needs
- Maintain accurate fleet records, maintenance history, driver information and inventory data
- Lead fleet audits, inspections and compliance reviews, implementing safety actions.

Safe Drivers

- Maintain and monitor driver behaviour, authorisation, assessment and training
- Lead on investigations for vehicle incidents, unsafe practices and non-compliance
- Promote a strong culture of road safety and vehicle care

Fleet Stores, Fuel and Asset Control

- Oversee fleet stores to ensure stock control and update reorder values for critical spares and consumables, supporting fleet procurement planning.
- Monitor fuel and lubricant consumption and justify or investigate variances
- Ensure fleet assets, tools, and workshop equipment are correctly managed and maintained.

Health, Safety and Compliance

- Conduct regular workshop safety inspections and ensure workshop and fleet operations comply with all health and safety requirements
- Ensure appropriate PPE is available and correctly used
- Maintain safe fleet facilities, fuel storage areas, battery charging areas and workshop working environment

**General:**

3. Uphold HALO's core values and standards, promoting its ethos and mission statement.
4. Ensure familiarity with and adherence to all HALO policies and procedures, especially the code of conduct and safeguarding

**Essential Requirements:**

- Recognised education in Mechanical Engineering, Automotive Technology, Fleet Management, Transport Management or a related field (preferred).
- Significant experience in fleet management, workshop management, vehicle maintenance systems or automotive engineering
- Strong knowledge of vehicle diagnostics and understanding of mechanical, electrical, and hydraulic systems.
- Experience managing fleet management systems, supervising mechanics and drivers.
- Excellent leadership, communication, and interpersonal skills.
- Strong written and verbal communication skills in Lao or English

**Desirable Requirements:**

- Experience working in the NGO sector, mining or remote site environments
- Experience using GPS tracking systems and fleet management systems
- Experience developing driver training or mechanic development
- Experience managing large and geographically dispersed vehicle fleets

**Physical Requirements for the role:**

High-heat tolerance, Prolonged standing, Heavy lifting.

## Travel Requirements

Travel requires in different HALO operational area

## To Apply:

Please submit a CV (no more than 2 pages) and a cover letter (no more than 1 page) outlining how your experience matches the key skills and competencies and your salary expectation to hr@halolaos.org by **21/09/2026.**

Applications without a cover letter tailored to this position will not be considered.

We reserve the right to amend the closing date depending on the number of applications received.

***The HALO Trust is an Equal Opportunity Employer and does not discriminate against any applicant for employment because of age, disability, gender reassignment, marriage and civil partnership, pregnancy and maternity, race, religion or belief, sex, or sexual orientation.***

***The HALO Trust is committed to attracting, developing, and retaining talented individuals from a wide range of backgrounds, experiences, and perspectives.***

***The HALO Trust is committed to ensuring that it provides a safe and trusted environment which safeguards and promotes the welfare and wellbeing of anyone who comes into contact with, or is part of, the Charity, with a zero-tolerance approach to behaviours which challenge this.***